**ຂ້າພະເຈົ້າໄດ້ຮັບຄວາມຊ່ວຍເຫຼືອປະເພດໃດແດ່?**

DDP/SA ສາມາດຊ່ວຍທ່ານຮຽນຮູ້ກ່ຽວກັບ:

☑ ສິດທິ ແລະ ຄວາມຮັບຜິດຊອບຕ່າງໆຂອງທ່ານ

☑ ການບໍລິການຕ່າງໆທີ່ທ່ານສາມາດໄດ້ຮັບຜ່ານສູນຕ່າງໆປະຈໍາ

☑ ຂະບວນການຂອງສູນ ແຜນການ ຂອງໂປຣແກມສະເພາະບຸກຄົນປະຈໍາເຂດ (IPP, Individual Program Plan)

☑ ຈະສາມາດຕິດຕໍ່ກັບກຸ່ມຊ່ວຍເຫຼືອຕົວເອງໃນຂອງທ່ານໄດ້ແນວໃດ

☑ ຈະເຂົ້າຮ່ວມກັບຄະນະກໍາມະການ ແລະ ຄະນະຕ່າງໆໄດ້ແນວໃດ



**ໜ່ວຍງານດູແລຜົນກະທົບຂອງຄວາມພິການ ຕໍ່ຊີວິດການເປັນຢູ່/ໜ່ວຍງານໃຫ້ການສະໜັບ ສະໜູນຕົວເອງ**


Disability Rights California

**Sacramento**
916-488-7787
1-800-719-5798 (TTY)

**Oakland**
510-267-1200
1-800-719-5798 (TTY)

**Los Angeles**
213-427-8747
1-800-719-5798 (TTY)

**San Diego**
619-239-7861
1-800-719-5798 (TTY)

**ໂທຟຣີ**

800-776-5746

ເວັບໄຊທ໌ **Disability Rights California**
www.disabilityrightsca.org



*5394. 12 – Lao*

*ຕຸລາ 2008*


# Disability Rights California

# ໜ່ວຍງານດູແລຜົນກະທົບຂອງຄວາມພິການຕໍ່ຊີວິດການເປັນຢູ່/ໜ່ວຍງານໃຫ້ການສະໜັບສະໜູນ ຕົວເອງ

**(Developmental Disabilities Peer/Self-Advocacy Unit)**



## ໜ່ວຍງານດູແລຜົນກະທົບຂອງຄວາມພິການຕໍ່ຊີວິດການເປັນຢູ່/ໜ່ວຍງານໃຫ້ການສະໜັບສະໜູນຕົວເອງ (DD P/SA) ໜ່ວຍງານແມ່ນຫຍັງ?

ພະນັກງານທີ່ບັນຈຸໃນໜ່ວຍງານດູແລຜົນກະທົບຂອງຄວາມພິການຕໍ່ຊີວິດການເປັນຢູ່/ໜ່ວຍງານໃຫ້ການສະໜັບສະໜູນຕົວເອງ (DDP/SA) ແມ່ນ ບຸກຄົນທີ່ມາໃຊ້ການບໍລິການຕ່າງໆຂອງສູນປະຈຳເຂດ ຊຶ່ງເປັນຜູ້ທີ່ໃຫ້ການຊ່ວຍເຫຼືອ. ນີ້ໝາຍຄວາມວ່າພວກເຂົາມີຄວາມເຂົ້າໃຈຈາກມູມມອງຂອງຜູ້ມາໃຊ້ບໍລິການ.



## ໜ່ວຍງານດູແລຜົນກະທົບຂອງຄວາມພິການຕໍ່ຊີວິດການເປັນຢູ່/ໜ່ວຍງານໃຫ້ການສະໜັບສະໜູນຕົວເອງ (DD P/SAU) ເຮັດຫຍັງໄດ້ແດ່?

DDPSA ສາມາດ:

- ☑ ພົບປະກັບອົງກອນການຊ່ວຍເຫຼືອອື່ນໆ (ເຊັ່ນ ການຊ່ວຍເຫຼືອຕົວເອງ) ເພື່ອແລກປ່ຽນສິ່ງທີ່ສົນໃຈຮ່ວມກັນ, ຂໍ້ມູນ ແລະ ສິ່ງທີ່ໜ່ວຍງານກຳລັງເຮັດຢູ່
- ☑ ຫາສິ່ງທີ່ສະໜັບສະໜູນ, ການຮ່ວມມື ແລະ/ຫຼື ຊັບພະຍາກອນອື່ນໆທີ່ອາດຈະ ຕ້ອງການຈາກໜ່ວຍງານຂອງພວກເຮົາ ຫຼື ສິດທິຄວາມພິການຂອງລັດຄາລີຟໍເນຍ
- ☑ ປັບປຸງ ແລະ ແຈກຢາຍ ໜັງສືປະຊາສົງເຄາະຂອງກຸ່ມຊ່ວຍເຫຼືອຕົວເອງ
- ☑ ເຮັດວຽກຮ່ວມກັບກຸ່ມອື່ນໃນໂຄງການ ການຊ່ວຍເຫຼືອຕ່າງໆ
- ☑ ຊ່ວຍໃຫ້ແຕ່ລະຄົນໄດ້ ຮູ້ກ່ຽວກັບສິດທິ ແລະ ຂະບວນການຂອງ IPP
- ☑ ເຮັດວຽກຮ່ວມກັບໜ່ວຍງານທົ່ວໄປຂອງລັດ,ກຸ່ມສະໜັບສະໜູນຕົວເອງປະຈຳເຂດ ແລະ ປະຈຳທ້ອງຖິ່ນ ເພື່ອການມີສ່ວນຮ່ວມຂອງຜູ້ໃຊ້ບໍລິການຕໍ່ໄປ
- ☑ ຊ່ວຍໃຫ້ແຕ່ລະຄົນຮຽນຮູ້ຕື່ມ ກ່ຽວກັບການສະໜັບ ສະໜູນການບໍລິການຕ່າງໆໃນການດຳລົງຊີວິດ, ການສະໜັບສະໜູນການຈ້າງ ງານ, ສິດທິຕ່າງໆ, IPP ແລະ ຫົວຂໍ້ສະໜັບສະໜູນອື່ນໆ



## ແມ່ນໃຜແດ່ສາມາດນຳໃຊ້ການບໍລິການຕ່າງໆຂອງພວກເຮົາ?

- ☑ ທຸກຄົນທີ່ມີບັນຫາທາງດ້ານການພັດທະນາ
- ☑ ທຸກຄົນທີ່ມີຄວາມສົນຕໍ່ການບໍລິການຂອງພວກເຮົາ
- ☑ ທຸກໜ່ວຍງານ ຫຼື ຄົນໃນອາຊີບໃດກໍ່ຕາມທີ່ຕ້ອງການຝຶກອົບຮົມກ່ຽວກັບບັນຫາຂອງຄວາມພິການ